**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ຄະນະປະຈຳ

ເລກທີ.....44...../ຄປຈ.ສພຂ

ບໍລິຄຳໄຊ, ວັນທີ 15 ກໍລະກົດ 2022

**ມະຕິ**

**ຂອງຄະນະປະຈຳສະພາປະຊາຊົນແຂວງບໍລິຄຳໄຊ**

**ວ່າດ້ວຍການກຳນົດເວລາດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນ ແຂວງບໍລິຄຳໄຊ ຊຸດທີ II**

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ມາດຕາ 60 ກອງປະຊຸມປະຈຳທຶກເດືອນຕົ້ນປີ ຂອງສະພາປະຊາຊົນຂັ້ນແຂວງ.

ເພື່ອເຮັດໃຫ້ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ຖືກຕ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ ກຳນົດໄວ້.

**ຄະນະປະຈຳສະພາປະຊາຊົນແຂວງບໍລິຄຳໄຊ ຕົກລົງ:**

**ມາດຕາ 1:** ກຳນົດເວລາດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໃນວັນທີ 10-12 ສິງຫາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ.

**ມາດຕາ 2:** ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ອົງການປົກຄອງແຂວງ, ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ມາດຕາ 3:** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາປະຊາຊົນແຂວງບໍລິຄຳໄຊ**

**ປະທານ**

ປ.ອ ສຸວັນນີ ໄຊຊະນະ

สแกนด้วย CamScanner